**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ
ກົມພາສີ

ເລກທີ 07461 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2021

# ແຈ້ງການແນະນຳ

ເຖິງ: **- ທົ່ວໜ້າພະແນກການອ້ອມຂ້າງກົມພາສີ**

**- ທົ່ວໜ້າພາສີປະຈຳແຂວງ, ນະຄອນຫຼວງ**

**- ທົ່ວໜ້າດ່ານພາສີຊາຍແດນ ແລະ ຫ້ອງການພາສີປະຈຳລະບົບສາງ ໃນຂອບເຂດທົ່ວປະເທດ**

ເລື່ອງ: **ການຢຸດຕິ ອອກເອກະສານຢັ້ງຢືນການເສຍພາສີ (ບ 9) ສຳລັບການນຳເຂົ້າພາຫະນະປັບໄຫມ (CBU)**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019;
- ອີງຕາມ ຄຳແນະນຳຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ສະບັບເລກທີ 3269/ກງ, ລົງວັນທີ 26 ກໍລະກົດ 2021;
- ອີງຕາມ ຂໍ້ຕົກລົງຂອງກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021;
- ອີງຕາມ ບົດບັນທຶກກອງປະຊຸມຂອງກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ຂັ້ນສູນກາງ ຄັ້ງວັນທີ 10 ທັນວາ 2021.

ໃນໄລຍະຜ່ານມາ ໄດ້ມີການນຳໃຊ້ໃບຢັ້ງຢືນການເສຍພາສີ (ບ 9) ສຳລັບການແຈ້ງພາສີນຳເຂົ້າສິນຄ້າປະເພດພາຫະນະ ເພື່ອຮັບປະກັນຄວາມຖືກຕ້ອງດ້ານຂໍ້ມູນການແຈ້ງພາສີ ແລະ ການຊຳລະຄ່າພາສີ ຊຶ່ງໄລຍະນັ້ນຍັງບໍ່ທັນໄດ້ນຳໃຊ້ລະບົບແຈ້ງພາສີເອເລັກໂຕຣນິກ ແລະ ຍັງຮັບຊຳລະຄ່າພາສີ ດ້ວຍເງິນສົດ. ປະຈຸບັນ, ລັດຖະການພາສີໄດ້ນຳໃຊ້ລະບົບການແຈ້ງພາສີທາງເອເລັກໂຕຣນິກ ASYCUDA ເຂົ້າໃນການຄຸ້ມຄອງການແຈ້ງພາສີ ແລະ ນຳໃຊ້ລະບົບ SmartTAX ສຳລັບການຊຳລະຄ່າພາສີ ຊຶ່ງສາມາດເຊື່ອມໂຍງ ແລະ ແລກປ່ຽນຂໍ້ມູນກັບຂະແໜງການກ່ຽວຂ້ອງ ເຮັດໃຫ້ການຄຸ້ມຄອງກວດກາມີຄວາມຖືກຕ້ອງ ແລະ ຊັດເຈນ. ເພື່ອເຮັດໃຫ້ຂັ້ນຕອນການແຈ້ງພາສີກະທັດຮັດ, ສະດວກ, ວ່ອງໄວ ແນໃສ່ເພີ່ມທະວີການອຳນວຍຄວາມສະດວກທາງດ້ານພາສີ ແລະ ການຄ້າ.

**ກົມພາສີ ອອກແຈ້ງການແນະນຳ ດັ່ງນີ້:**

1. ການແຈ້ງພາສີເປັນລາຍລະອຽດສຳລັບການນຳເຂົ້າພາຫະນະຮູບແບບເປັນຄັນ (CBU), ພາຍຫຼັງ ສຳເລັດຂັ້ນຕອນການແຈ້ງພາສີເປັນລາຍລະອຽດຢູ່ດ່ານພາສີຊາຍແດນແລ້ວ ໃຫ້ຜູ້ປະກອບການນຳໃຊ້ໃບແຈ້ງພາສີເປັນລາຍລະອຽດເອກະພາບອາຊຽນ (ASEAN Customs Declaration Document - ACDD) ແລະ ເອກະສານປະກອບ ສະບັບຕົ້ນ(ສະບັບແທ້) ທີ່ຜ່ານການກວດສອບຂໍ້ມູນຢ່າງຖືກຕ້ອງ, ຊັດເຈນ ຜ່ານລະບົບເອເລັກໂຕຣນິກ ໃນການຂຶ້ນທະບຽນພາຫະນະຕາມລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ.
2. ໃຫ້ລັດຖະການພາສີແຕ່ລະຂັ້ນ ຢຸດຕິການອອກເອກະສານຢັ້ງຢືນການເສຍພາສີ (ບ 9) ສຳລັບການແຈ້ງນຳເຂົ້າພາຫະນະໃນຮູບແບບເປັນຄັນ (CBU).
3. ສຳລັບການແຈ້ງພາສີໃນການນຳເຂົ້າພາຫະນະຮູບແບບສິ້ນສ່ວນປະກອບ (CKD, IKD), ເນື່ອງຈາກໃນການແຈ້ງພາສີນຳເຂົ້າເບື້ອງຕົ້ນ ຍັງບໍ່ທັນໄດ້ລະບຸບາງຂໍ້ມູນຊັດເຈນ ເຊັ່ນ: ເລກຈັກ, ເລກຖັງ ແລະ ສີເປັນຕົ້ນ. ສະນັ້ນ, ພາຍຫຼັງ ການນຳເຂົ້າ, ປະກອບເປັນຄັນສົມບູນ ແລະ ມີຂໍ້ມູນກ່ຽວກັບພາຫະນະທີ່ຖືກຕ້ອງຊັດເຈນ ໃຫ້ຜູ້ປະກອບການນຳເອົາເອກະສານແຈ້ງພາສີເປັນລາຍລະອຽດ ແລະ ເອກະສານຢັ້ງຢືນຈາກຂະແໜງການກ່ຽວຂ້ອງມາຍື່ນສະເໜີຕໍ່ກົມພາສີເພື່ອອອກໃບຢັ້ງຢືນການເສຍພາສີ (ບ 9) ແລ້ວຈຶ່ງໄປດຳເນີນການຂຶ້ນທະບຽນຕາມລະບຽບການ.
4. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າມີຂໍ້ຫຍຸ້ງຍາກໃຫ້ລາຍງານກົມພາສີ ເພື່ອມີວິທີແກ້ໄຂຕາມກົດໝາຍ ແລະ ລະບຽບການ.
5. ແຈ້ງການສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງກົມພາສີ ສະບັບເລກທີ 0675/ກພສ, ລົງວັນທີ 08 ມັງກອນ 2010, ມະຕິຕົກລົງກົມພາສີ ສະບັບເລກທີ 1804/ກພສ, ລົງວັນທີ 30 ມິຖຸນາ 2010, ບົດແນະນຳກົມພາສີ ສະບັບເລກທີ 1853/ກພສ, ລົງວັນທີ 08 ກໍລະກົດ 2010 ແລະ ມີຜົນບັງຄັບໃຊ້ ນັບແຕ່ ວັນທີ 01 ມັງກອນ 2022 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າກົມພາສີ**

ພູເຂົາຄຳ ວັນນະວົງໄຊ

**ນຳສົ່ງ:**

- **ກົມຂົນສົ່ງ (ກະຊວງ ຍທຂ)** 1 ສະບັບ "ເພື່ອຊາບ"
- **ກົມການນຳເຂົ້າ ແລະ ສົ່ງອອກ (ກະຊວງ ອຄ)** 1 ສະບັບ "ເພື່ອຊາບ"
- **ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ** 1 ສະບັບ "ເພື່ອຊາບ"
- **ພະແນກການກົມພາສີ ພະແນກລະ** 1 ສະບັບ "ເພື່ອປະຕິບັດ"
- **ພາສີປະຈຳແຂວງ, ນະຄອນຫຼວງ** 1 ສະບັບ "ເພື່ອປະຕິບັດ"
- **ສຳເນົາ** 1 ສະບັບ